# ວັດຈະນານຸກົມ

# ພາສາປາລີ-ລາວ

ຄົ້ນຄວ້າຮຽບຮຽງໂດຍ ສີສະເຫວີຍ ສຸວັນນີ

ພິມເທື່ອທີ່ໜຶ່ງ

ໂຄງການພັດທະນາ ວັດຈະນານຸກົມປາລີ-ລາວ

ນະຄອນຫຼວງວຽງຈັນ, ພ.ສ. ໒໕໔໗, ຄ.ສ. ໒໐໐໔

# ວັດຈະນານຸກົມ ປາລີ-ລາວ

(ສະບັບປະຖົມ)

ໂດຍ

ສີສະເຫວີຍ ສຸວັນນີ

ພິມເທື່ອທີ່ໜຶ່ງ ພ.ສ. ໒໕໔໗, ຄ.ສ. ໒໐໐໔

(ສະຫງວນລິຂະສິດ)

# ຄຳນຳຂອງໂຄງການ.

ສັບປາລີ ມີຄວາມຫມາຍສຳຄັນ ໃນທາງພາສາສາດລາວ, ຖືກນຳໃຊ້ຫຼາຍ ໃນບົດປະພັນ-ວັນນະຄະດີ ແລະສັບເຕັກນິກວິຊາການ. ສັບປາລີ ມີຄວາມຫມາຍ ເລິກເຊິ່ງເຂົ້າໃຈຍາກສຳລັບຜູ້ທີ່ບໍ່ເຄີຍຜ່ານການຮຽນຮູ້ທາງດ້ານນີ້ໂດຍສະເພາະ ຈຶ່ງຈຳເປັນຕ້ອງໄດ້ມີການອະທິບາຍຄວາມຫມາຍ ພ້ອມທັງບອກທີ່ມາຂອງແຕ່ລະສັບໄວ້ເພື່ອເຮັດໃຫ້ຜູ້ສຶກສາຄົ້ນຄວ້າ ໄດ້ເຂົ້າໃຈຄຳສັບງ່າຍຂຶ້ນ.

ການທີ່ທ່ານສີສະເຫວີຍ ສຸວັນນີ ໄດ້ຄົ້ນຄວ້າຮຽບຮຽງ ວັດຈະນານຸກົມປາລີ-ລາວ ຂຶ້ນໃນຄັ້ງນີ້ຖືວ່າເປັນນິມິດຫມາຍອັນດີ ເຊິ່ງຈະເປັນປະໂຫຍດແກ່ການສຶກສາຄົ້ນຄວ້າທາງດ້ານຄຳສັບແລະວັນນະຄະດີຂອງລາວ.

ການຄົ້ນຄວ້າຄັ້ງນີ້ ໄດ້ໃຊ້ພະຍັນຊະນະລາວ ໒໗ ໂຕຕາມໄວຍາກອນລາວທີ່ພວມໃຊ້ຢູ່ໃນປັດຈຸບັນ ແຕ່ວ່າຈ້ຳເມັດທາງກ້ອງໂຕພະຍັນຊະນະທີ່ອອກສຽງໜັກຕາມສຽງຂອງພາສາປາລີ. ສະນັ້ນ,ຈຶ່ງຮຽກຮ້ອງ ໃຫ້ມີການນຳໃຊ້ພາສາປາລີໃນພາສາລາວຢ່າງມີການເລືອກເຟັ້ນແລະມີຫຼັກການຄັກແນ່ ຕາມຫຼັກໄວຍາກອນ ທີ່ໃຊ້ໃນຫຼັກສູດການສຶກສາ. ທັງນີ້ ເພື່ອຫຼີກເວັ້ນການໃຊ້ສັບ ແບບຊອດກະຈາ ບໍ່ມີຫຼັກການອັນຈະພາໃຫ້ພາສາແລະວັນນະຄະດີຂອງລາວ ຂາດຄວາມຖືກຕ້ອງຊັດເຈນ.

ການຈັດພິມຄັ້ງທຳອິດນີ້ ອາດຈະມີຂໍ້ຂາດຕົກບົກພ່ອງບາງປະການຈຶ່ງຫວັງວ່າຈະໄດ້ຮັບອະໄພ ແລະໄດ້ຮັບຄວາມຮ່ວມມື ປະກອບຄຳຄິດຄຳເຫັນຈາກ ບັນດາທ່ານຜູ້ອ່ານເປັນຢ່າງດີ ເພື່ອວ່າຈະໃຊ້ເປັນຂໍ້ມູນໃນການປັບປຸງການຈັດພິມໃນຄັ້ງຕໍ່ໄປ.

ທີ່ນະຄອນຫຼວງວຽງຈັນ,ວັນທີ່ ໒໗ ກໍລະກົດ ໒໐໐໔.

ໂຄງການພັດທະນາວັດຈະນານຸກົມປາລີ-ລາວ.

# ສັມໂມທະນີຍະກະຖາຂອງປະທານສູນກາງ ອ.ພ.ສ.ລາວ.

ພາສາປາລີ ເປັນພາສາ ທີ່ພະພຸດທະເຈົ້າ ເຄີຍນຳໃຊ້ໃນການເຜີຍແຜ່ ພະພຸດທະສາສະໜາ ໃນສະໄໝພຸດທະການ ແລະ ພາສານີ້ ຖືກນຳໃຊ້ໃນການບັນທຶກພະໄຕປິດົກ ຊຶ່ງເປັນຄຳສັ່ງສອນຂອງພະພຸດທະເຈົ້າເທົ່າເຖິງທຸກວັນນີ້. ບັນດາປະເທດທີ່ນັບຖື ພະພຸດທະສາສະໜາ ນິກາຍເຖຣະວາດ ຫຼື ຫີນະຍານ ເຊັ່ນ : ປະເທດສີລັງກາ, ມຽນມາ, ຂະແມ,ໄທ ແລະ ລາວ ລ້ວນແຕ່ຖືເອົາພາສາປາລີເປັນຫຼັກ ໃນການເທສະໜາສັ່ງສອນປະຊາຊົນ. ນອກຈາກເປັນພາສາສັກສິດໃນທາງສາສະໜາແລ້ວ,ພາສາປາລີຍັງມີບົດບາດ ເປັນແມ່ບົດຫຼືເຄົ້າສັບເຮັດໃຫ້ພາສາຂອງບັນດາປະເທດ ທີ່ກ່າວມາເທິງນີ້ ມີການວິວັດ ຂະຫຍາຍຕົວ ເປັນເງື່ອນໄຂອັນສະດວກໃຫ້ແກ່ການປະກອບສັບ ທາງດ້ານການເມືອງ,ເສດຖະກິດ,ວັດທະນະທັມ ແລະເຕັກນິກວິທະຍາການຂອງແຕ່ລະປະເທດນຳດ້ວຍ. ສະນັ້ນ, ການທີ່ ທ່ານສີສະເຫວີຍ ສຸວັນນີ ໄດ້ໃຊ້ຄວາມອຸດສາຫະ ພະຍາຍາມ ຄົ້ນຄວ້າ ຮຽບຮຽງແລະຈັດພິມວັດຈະນານຸກົມພາສາປາລີ-ລາວ ຂຶ້ນມາຮັບໃຊ້ການສຶກສາ ເປັນເທື່ອທຳອິດໃນລາວ ຖືວ່າມີຄຸນຄ່າ ແລະເປັນປະໂຫຍດຢ່າງສູງ, ບໍ່ພຽງແຕ່ ເປັນປະໂຫຍດ ສະເພາະແຕ່ທາງດ້ານອັກສອນສາດແລະພາສາສາດເທົ່ານັ້ນ,ແຕ່ຍັງເປັນປະໂຫຍດແກ່ການດຳລົງຄົງຢູ່ຂອງພະພຸດທະສາສະໜາອີກດ້ວຍ ເພາະວ່າພາສາປາລີເປັນຫຼັກເຄົ້າຄຳສັ່ງສອນຂອງພະພຸດທະເຈົ້າແລະອີກປະການໜຶ່ງ ມັນຍັງຈະເອື້ອອຳນວຍ ປະໂຫຍດໃຫ້ແກ່ໂຄງການແປພະໄຕປິດົກ ຈາກພາສາປາລີ ມາເປັນພາສາລາວ ຊຶ່ງອາດຈະມີຂຶ້ນໃນອະນາຄົດ ອັນໃກ້ນີ້ນຳດ້ວຍ.

ໃນນາມປະທານສູນກາງ ອ.ພ.ສ.ລາວ ແລະໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສະແດງມຸທິຕາຈິດ ແລະອະນຸໂມທະນາສາທຸການ ໃນຜົນງານ ອັນເປັນມະຫາກຸສົນທີ່ຜູ້ແຕ່ງໄດ້ປະກອບສ່ວນຢ່າງໃຫຍ່ຫຼວງໃຫ້ແກ່ວົງການ ການສຶກສາແລະພະພຸດທະສາສະໜາ ໃນໂອກາດນີ້ດ້ວຍ.

ວຽງຈັນ, ວັນທີ່ ໒໔ ກໍລະກົດ ພ.ສ. ໒໐໐໔

ປະທານສູນກາງ ອ.ພ.ສ. ລາວ,

ພະມະຫາວິຈິດ ສິງຫະລາດ

## ຄໍານໍາຂອງຜູ້ຄົ້ນຄວ້າຮຽບຮຽງ.

ພາສາປາລີເປັນພາສາທີ່ມາຈາກທ້ອງຖິ່ນໃດຂອງອິນເດຍກໍຍັງບໍ່ທັນມີໃຜຕອບໄດ້ ຢ່າງເດັດຂາດ. ນັກປາດດ້ານພາສາປາລີບາງທ່ານໄດ້ໃຫ້ທັດສະນະວ່າ ພາສາປາລີເປັນພາສາປາກເວົ້າຂອງພະພຸດທະເຈົ້າ ແລະ ເປັນພາສາຂອງຊາວແຄວ້ນໂກສະລະ ເຊິ່ງມີອານາເຂດລະຫວ່າງເນປານທາງພາກເໜືອຫາແມ່ນໍ້າຄົງຄາ ທາງພາກໃຕ້ ແລະແຕ່ແມ່ນໍ້າຄົງຄາ ທາງພາກຕາເວັນຕົກຕິດກັບ ແຄວ້ນວັດຊີທາງພາກເໜືອ. ອານາຈັກໂກສະລະໃນສະໄໝພຸດທະການເປັນອານາຈັກທີ່ມີອິດທິອໍານາດສູງ.ສວນລຸມພິນີສະຖານທີ່ພະພຸດທະເຈົ້າປະສູດກໍແມ່ນຢູ່ພາຍໃຕ້ອານາຈັກນີ້.ສະນັ້ນ,ນັກປາດດ້ານພາສາປາລີຫລາຍທ່ານເຊັ່ນ: ທ່ານສາດສະດາຈານ ດຣ.ຣີດເດວິດ ແລະສາດສະດາຈານດຣ.ວິລລຽມສະຕິດເຊື່ອວ່າ ພາສາປາລີ ເປັນພາສາປາກເວົ້າຂອງປະຊາຊົນຊາວແຄວ້ນໂກສະລະ ແລະເປັນພາສາແມ່ຂອງພະພຸດທະເຈົ້າ ເຊິ່ງຖືເປັນພາສາມາດຕະຖານ ໃນສະຕະວັດທີ່ ໗-໕ ກ່ອນ ຄ.ສ. ສັງຄາຍະນາຄັ້ງທີ່ສາມທີ່ປະເທດອິນເດຍໄດ້ມີການຮຽບຮຽງ ພຸດທະວະຈະນະເປັນພາສາປາລີ ດ້ວຍການທ່ອງຂຶ້ນໃຈ.ພາຍຫລັງສັງຄາຍະນາຄັ້ງທີ່ສາມພະມະຫິນທະເຖຣະ ໄດ້ນໍາເອົາຄໍາສັ່ງສອນຂອງພະພຸດທະເຈົ້າໄປເຜີຍແຜ່ທີ່ປະເທດສີລັງກາ ແລະໃນສັງຄາຍະນາຄັ້ງທີ່ສີ່ຝ່າຍເຖລະວາດ ທີ່ປະເທດສີລັງກາໃນປີ ໔໔໗ ກ່ອນ ຄ.ສ. ພຸດທະວະຈະນະຖືກບັນທຶກເປັນພາສາປາລີໃສ່ໃນໃບລານ. ຈາກນັ້ນພາສາປາລີເລີ່ມມີບົດບາດແລະອິດທິພົນແກ່ພາສາຂອງແຕ່ລະປະເທດທີ່ຖືພຸດທະສາສະໜາ ຝ່າຍເຖລະວາດເຊັ່ນ: ປະເທດ ຊະແມ,ມຽນມາ, ໄທ ແລະລາວເປັນຕົ້ນ.ພຸດທະສາສະໜານິກາຍເຖລະວາດຖືກນໍາເຂົ້າມາເຜີຍແຜ່ຢູ່ລາວໃນກາງສະຕະວັດທີ່ສິບສີ່ໂດຍແມ່ນສົມເດັດເຈົ້າຟ້າງຸ່ມມະຫາລາດເປັນຜູ້ນໍາເຂົ້າມາຈາກປະເທດຂະແມ. ພຸດທະສາສະໜານິກາຍນີ້ ໄດ້ກາຍເປັນສູນກາງ ແຫ່ງການສຶກສາ ແລະວັດທະນະທໍາຂອງຊາດລາວໃນສະຕະວັດຕໍ່ມາແລະກໍາເນີດຂອງການສຶກສາໃນລາວ

ກໍແມ່ນມາຈາກວັດແຫ່ງພຸດທະສາສະໜາຝ່າຍເຖລະວາດນີ້ ແລະນັບແຕ່ນັ້ນມາພາສາປາລີຖືກນໍາມາສິດສອນຢູ່ໂຮງຮຽນວັດແຫ່ງພຸດທະສາສະໜາຂອງລາວ. ພາສາປາລີໄດ້ກາຍເປັນພາສາສັກສິດເພາະເປັນພາສາທີ່ບັນທຶກພະໄຕປີດົກ ເຊິ່ງເປັນຄໍາສັ່ງສອນຂອງພະພຸດທະເຈົ້າ, ໄດ້ມີບົດບາດ ແລະອິດທິພົນສູງໃນພາສາແລະວັນນະຄະດີ ລາວ. ເພື່ອໃຫ້ພາສາລາວມີຄວາມອຸດົມສົມບູນ ທັງທາງດ້ານໄວຍາກອນແລະດ້ານສັບທະສາດ(ຄໍາສັບ),ບັນດານັກປາດອາຈານລາວສະໄໝບູຮານໄດ້ນໍາຍືດຄໍາລາວຈາກເຄົ້າສັບປາລີເຊິ່ງມີຢູ່ໃນວັນນະຄະດີແລະຄໍາສັບທາງການແລະທາງວິຊາການຢ່າງຫລວງຫລາຍ. ເພາະເຮົາຖືວ່າພາສາປາລີໄດ້ກາຍເປັນແມ່ບົດ ເຮັດໃຫ້ຄໍາສັບໃນພາສາລາວມີການວິວັດຂະຫຍາຍຕົວເຊັ່ນຄໍາວ່າ: ສາທາລະນະລັດປະຊາທິປະໄຕ. ສັນຕິພາບເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.ຍຸດທະສາດ, ຍຸດໂທບາຍ, ສໍາພັນທະພາບ, ກໍາມະກອນ, ກໍາມະການແລະອື່ນໆ. ບາງສັບເຮົາອາດກໍານົດບໍ່ໄດ້ວ່າສັບໃດມາຈາກເຄົ້າປາລີ ແລະສັບໃດມາຈາກເຄົ້າພາສາລາວຖ້າວ່າເຮົາບໍ່ໄດ້ສຶກສາຢ່າງລະອຽດເຖິງກົກເຖິງຮາກຂອງພາສາ. ນັກສຶກສາດ້ານອັກສອນສາດ ແລະພາສາສາດລາວມີຄວາມຈໍາເປັນຢ່າງຍິ່ງທີ່ຈະຕ້ອງໄດ້ຮຽນຮູ້ພາສາປາລີ ຢ່າງໜ້ອຍກໍຄວນຮູ້ວ່າຄໍາລາວຄໍາໃດທີ່ມີເຄົ້າສັບມາຈາກປາລີ ບໍ່ດັ່ງນັ້ນພວກເຮົາກໍຈະບໍ່ສາມາດຂຽນຫລືອ່ານພາສາລາວໄດ້ຖືກຕ້ອງ. ການຂຽນຜິດຫລືການອ່ານຜິດພຽງແຕ່ສຽງສັ້ນເປັນສຽງຍາວ ຫລືສຽງຍາວເປັນສຽງສັ້ນສຽງສູງເປັນສຽງຕໍ່າຫຼືສຽງຕໍ່າເປັນສຽງສູງກໍເຮັດໃຫ້ຄວາມໝາຍຂອງພາສາຜິດຜ້ຽນໄປ ເພາະວ່າສັບທີ່ໄດ້ມາຈາກເຄົ້າພາສາປາລີຫຼືສັນສະກຣິດ ຈະບໍ່ໃຊ້ວັນນະຍຸດ ແຕ່ມັນຈະມີການຜັນສຽງດ້ວຍໂຕອັກສອນເອງ. ພາສາປາລີບໍ່ມີຕົວອັກສອນເປັນຂອງຕົນເອງ, ຢູ່ປະເທດອິນເດຍເພິ່ນໃຊ້ໂຕອັກສອນເທວະນາຄຣີ, ຢູ່ມຽນມາເພິ່ນໃຊ້ອັກສອນມຽນມາ, ຢູ່ສີລັງກາເພິ່ນໃຊ້ອັກສອນສີຫາລີ,ຢູ່ກໍາປູເຈຍເພິ່ນໃຊ້ອັກສອນກໍາປູເຈຍ, ຢູ່ໄທເພິ່ນໃຊ້ອັກສອນໄທ, ຢູ່

ທາງຕາເວັນຕົກເພິ່ນໃຊ້ອັກສອນໂຣມັນ. ສຳລັບຢູ່ລາວເຮົາ ມີໂຕອັກສອນທີ່ສາມາດໃຊ້ຂຽນພາສາປາລີໄດ້ເຖິງສາມຊະນິດ ຄື: ຊະນິດທີ່ມີຢູ່ໃນໄວຍາກອນລາວສະບັບທ່ານອິດຂອງພຸດທະບັນດິດສະພາຈັນທະບູລີ, ສະບັບປັດຈຸບັນ ແລະໂຕອັກສອນທ່າເຊິ່ງເປັນໂຕອັກສອນ ທີ່ມາພ້ອມກັບຄຳສັ່ງສອນຂອງພະພຸດທະເຈົ້າ ຍ້ອນວ່າເພິ່ນໃຊ້ອັກສອນຊະນິດນີ້ຂຽນທຳມະໃສ່ໃບລານເພື່ອເທດສັ່ງສອນປະຊາຊົນ ດັ່ງນັ້ນຄົນທັງຫລາຍຈຶ່ງເອີ້ນໂຕອັກສອນຊະນິດນີ້ວ່າ: ໂຕທຳ. ຂ້າພະເຈົ້າໄດ້ເລືອກເອົາອັກສອນລາວທີ່ມີຢູ່ໃນໄວຍາກອນລາວສະບັບປັດຈຸບັນມາໃຊ້ໃນການພິມວັດຈະນານຸກົມສະບັບນີ້ ໂດຍໃຊ້ເຄື່ອງຫມາຍຈ້ຳເມັດໄວ້ກ້ອງໂຕອັກສອນທີ່ມີສຽງທະນິດ(ສຽງຫນັກ) ສ່ວນໂຕອັກສອນລາວສະບັບທີ່ຄົບຖ້ວນຕາມສຽງພາສາປາລີນັ້ນ ໄດ້ຂຽນໄວ້ໃນວົງເລັບ ທັງນີ້ເພື່ອໃຫ້ຜູ້ທີ່ບໍ່ທັນຄຸ້ນເຄີຍກັບໂຕອັກສອນໃນໄວຍາກອນສະບັບນີ້ ໄດ້ອ່ານປຽບທຽບເອົາເອງ ແລະໃຫ້ເຫັນແຈ້ງວ່າຄຳສັບບາງສັບທີ່ເຮົາໄດ້ເຄົ້າມາຈາກປາລີນັ້ນໄດ້ມາຈາກເຄົ້າຂອງໂຕອັກສອນໂຕໃດແທ້. ຂ້າພະເຈົ້າໄດ້ສະເຫນີໂຕອັກສອນຕ່າງໆທັງສີ່ຊະນິດທີ່ສາມາດນຳໃຊ້ຂຽນພາສາປາລີຢູ່ໃນລາວ ເພື່ອໃຫ້ທ່ານຜູ້ສຶກສາໄດ້ຄົ້ນຄວ້າແລະປຽບທຽບອ່ານຄຽງຄູ່ກັນໄປ. ການຮຽງລຳດັບໂຕອັກສອນນັ້ນກໍເປັນໄປຕາມແບບເດີມຄືຮຽງຕາມລຳດັບສະຫຼະ ແລ້ວຈຶ່ງຮຽງພະຍັນຊະນະຕາມວັກຕອນຂອງຫມວດອັກສອນດັ່ງຕໍ່ໄປນີ້:

ສຣະ ໘ ໂຕ : ອະ ອາ ອິ ອີ ອຸ ອູ ເອ ໂອ

ພະຍັນຊະນະ ໓໓ ໂຕ :

ກ ຂ ຄ ຄ຺ ງ

ຈ ສ຺ ຊ ຊ຺ ຍ຺

ຕ຺ ຖ຺ ດ ດ຺ ນ຺

ຕ ຖ ທ ທ຺ ນ

ປ ຜ ພ ພຸ ມ

ຍ ຣ ລ ວ ສ ຫ ລຸ ອັງ(ໍ).

ການປຽບທຽບໂຕອັກສອນ:

ອັກສອນລາວ ທີ່ມີຢູ່ໃນໄວຍາກອນລາວສະບັບທຳອິດ

ສຣະ ມີ ໗ ໂຕ ຄື: ອະ ອາ ອິ ອີ ອຸ ອູ ເອ ໂອ.

ພະຍັນຊະນະ ມີ ໓໓ ໂຕ ຈັດເປັນ ໕ ວັກ ແລະ ໑ ອະວັກດັ່ງນີ້:

ກະ ວັກ: ກ ຂ ຄ ฆ ງ

ຈະ ວັກ: ຈ ฉ ຊ ฌ ຍ

ຜະ ວັກ: ฎ ฐ ฑ ฒ ณ

ຕະ ວັກ: ຕ ຖ ທ ธ ນ

ປະ ວັກ: ປ ຜ ພ ภ ມ

ອະວັກ: ຍ ຣ ລ ວ ສ ຫ ฬ ອັງ(ໍ).

ອັກສອນລາວປັດຈຸບັນ:

ກະ ວັກ: ກ ຂ ຄ ຄຸ ງ

ຈະ ວັກ: ຈ ສຸ ຊ ຊຸ ຍຸ

ຕະ ວັກ: ຕຸ ຖຸ ດ ດຸ ນຸ

ຕະ ວັກ: ຕ ຖ ທ ທຸ ນ

ປະ ວັກ: ປ ຜ ພ ພຸ ມ

ອະວັກ: ຍ ຣ ລ ວ ສ ຫ ລຸ ອັງ(ໍ).

ອັກສອນທັມລາວມີດັ່ງນີ້:

ສຣະ ໗ ໂຕ ໂດຍສະເໜີໃຫ້ເບິ່ງເປັນສອງແບບ ຄື:

ອ ອາ ຍ ຍີ ຂ ຂູ ຯ ໂອ ຫລື

ອ ອາ ອິ ອີ ອຸ ອູ ເອ ໂອ

ພະຍັນຊະນະມີ ໓໓ ໂຕຈັດເປັນວັກດັ່ງນີ້:

ກ ວັຄຄ ກ ຂ ຄ ຆ ງ

ຈ ວັຄຄ ຈ ຉ ຊ ຌ ຎ

ຏ ວັຄຄ ຏ ຐ ຑ ຒ ຓ

ຕ ວັຄຄ ຕ ຖ ທ ຘ ນ

ປ ວັຄຄ ປ ຜ ພ ຠ ມ

ອ ວັຄຄ ຍ ຣ ລ ວ ສ ຫ ຬ

ທຽບອັກສອນລາແຕັງມີດັ່ງນີ້:

8 Vowels: A Ā I Ī U Ū E O

33 consonants :

Ka group: Ka KHa Ga GHa Ŋa

Ca group: Ca CHa Ja JHa Ya

Ṭa group: Ṭa ṬHa Ḍa ḌHa Ṇa

Ta group: Ta THa Da DHa Na

Pa group: Pa PHa Ba BHa Ma

A group: Ya Ra La Va Sa Ha Ḷa AM.

## ການຂຽນສັບປາລີ.

ໃນວັດຈະນານຸກົມຫົວນີ້ ໄດ້ໃຊ້ສະຫຼະຂຽນໃສ່ທຸກຕົວ ແລະ ໃຊ້ໄມ້ກັນແທນການຈ້ຳເມັດທາງກ້ອງ. ຕາມຫຼັກການແລ້ວ, ໃນພາສາປາລີ ຈະບໍ່ມີຮູບສະຫຼະ ອະ ແຕ່ໃຫ້ອອກສຽງເປັນ ອະ ເຊັ່ນວ່າ: ກ ຂ ຄ ຄ຺ ງ ອ່ານເປັນ ກະ ຂະ ຄະ ຄຸະ ງະ ແລະເພິ່ນໃຊ້ຈ້ຳເມັດທາງກ້ອງເພື່ອຮູ້ວ່າເປັນຕົວສະກົດ.ແຕ່ສຳລັບໃນວັດຈະນານຸກົມສະບັບນີ້ຂ້າພະເຈົ້າໄດ້ໃຊ້ຮູບສະຫຼະ ອະ ໃນບ່ອນທີ່ມີສະຫຼະ ອະ ແລະ ບໍ່ໄດ້ຈ້ຳເມັດທາງກ້ອງຕົວສະກົດ. ທັງນີ້ເພື່ອບໍ່ໃຫ້ສັບສົນກັບພະຍັນຊະນະສຽງໜັກທີ່ມີການຈ້ຳເມັດໄວ້ທາງກ້ອງ. ຢ່າງໃດກໍດີ, ການຂຽນທີ່ຖືກຕ້ອງຕາມຫຼັກການພາສາປາລີ ໂດຍມີການຈ້ຳເມັດທາງກ້ອງເພື່ອຊີ້ບອກວ່າເປັນຕົວສະກົດນັ້ນໃຫ້ເບິ່ງ ຄຳສັບທີ່ຢູ່ໃນວົງເລັບ. ການຈ້ຳເມັດທາງກ້ອງຂອງຄຳທີ່ມີຢູ່ໃນວົງເລັບນັ້ນ ບໍ່ແມ່ນເປັນເຄື່ອງໝາຍຂອງສຽງທະນິດ (ສຽງໜັກ) ແຕ່ວ່າບົ່ງບອກວ່າເປັນຕົວສະກົດ.

## ຫຼັກການອ່ານແລະການສະກົດຄຳ.

ເນື່ອງຈາກໄດ້ໃຊ້ໂຕອັກສອນ ໃນໄວຍາກອນປັດຈຸບັນຂຽນຄຳສັບປາລີ ໂດຍໃຊ້ເຄື່ອງໝາຍຈ້ຳທາງກ້ອງບົ່ງບອກພະຍັນະນະທີ່ມີສຽງທະນິດ(ໜັກ) ແລະໃນພາສາປາລີນັ້ນມີຕົວສະກົດທີ່ຕ້ອງໃຊ້ຫຼາຍຕົວ ເພາະວ່າແຕ່ລະຕົວສະກົດ ມັນຈະບົ່ງບອກເຖິງຄວາມໝາຍຂອງຄຳຢ່າງຈະແຈ້ງ. ເພື່ອອ່ານພາສາປາລີໄດ້ສະດວກ ຂໍສະເໜີຫຼັກການ ໃນການສະກົດຄຳໃນພາສປາລີ ດັ່ງຕໍ່ໄປນີ້:

ຕົວສະກົດ ຄ ເທົ່າກັບ ກ ເຊັ່ນ ຄຳວ່າ : ອັຄຄະ (ອ່ານເປັນ ອັກຄະ)

ຕົວສະກົດ ງ ເທົ່າກັບ ງ ຫຼື : ສັງຄະ (ອ່ານເປັນສັງຄະ)

ຕົວສະກົດ ຈ ສ ຊ ດ ຕ຺ ຕ ທ ເທົ່າກັບ ດ ເຊັ່ນ : ສັຈຈະ(ສັດຈະ),

ທັສສະ(ທັດສະ),ວິສັຊຊະນາ(ວິສັດຊະນາ),ອຸດດິ(ອຸດທິ),ສັຕຕະ(ສັດຕະ),ເຊຕຸກະ (ເຊດຖະ), ພຸທທັສສະ(ພຸດທັດສະ)

ຕົວສະກົດ ຍ ລ ເທົ່າກັບ ນ : ວິຍຍານະ (ວິນຍານະ),ວັລລະພະ(ວັນລະພະ)

ຕົວສະກົດ ປ ພ ເທົ່າກັບ ບ : ສັປໂປ(ສັບໂປ),ສັພພັງ(ສັບພັງ).

ຕົວສະກົດ ຍ ເທົ່າກັບ ຍ : ເວຍຍະ (ເວີຍຍະ).

## ຄຳຫຍໍ້ໃນວັດຈະນານຸກົມຫົວນີ້.

| | | | | | |
|---|---|---|---|---|---|
| ນ. | = | ນາມ | ຄ. | = | ຄຸນນາມ |
| ສັພ. | = | ສັພພະນາມ | ນາມກິ. | = | ນາມກິຕ |
| ກິ.ກິ | = | ກິຣິຍາກິດ | ກິ.ອາ | = | ກິຣິຍາ ອາຂຍາຕ |
| ກິ.ວິ | = | ກິຣິຍາວິເສດ | ຕັທ. | = | ຕັດທິຕ |
| ອຸປ. | = | ອຸປະສັຄ | ນິ. | = | ນິບາຕ |
| ສັງ. | = | ສັງຂຍາ | ຣາ. | = | ທາຕຸ |
| ອັພ. | = | ອັພພະຍະຍະສັບ | ປັຈ. | = | ປັດໄຈ |
| ອຸ. | = | ອຸທານ | ອາ. | = | ອາລະປະນະ |

ນະໂອກາດນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງຈິງໃຈ ແລະຮູ້ບຸນຄຸນເປັນຢ່າງສູງຕໍ່ບັນດາທ່ານທີ່ມີສ່ວນກ່ຽວຂ້ອງ,ປະກອບສ່ວນຊ່ວຍເປັນຕົ້ນ: ທ່ານອາຈານມະຫານອນ ອຸເທນສັກດາ ຜູ້ຊ່ວຍຄົ້ນຄວ້າ,ທ່ານອາຈານມະຫາກິແກ້ວ ອຸດົມ,ທ່ານອາຈານມະຫາບຸນຍົກ ແສນສູນທອນ, ທ່ານຈັນທອນ ເທບຄຳວົງ ຜູ້ຊ່ວຍກວດແກ້ແລະ ທ່ານວິໄລສັກ ບຸນມາດາ ຜູ້ພິມເຂົ້າຄອມພິວເຕີ. ນອກນີ້ຍັງມີ ທ່ານສີວຽງແຂກ ກອນນີວົງ ຫົວໜ້າກົມພິມຈຳໜ່າຍ

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ທີ່ຊ່ວຍປັບປຸງເຮັດໃຫ້ວັດຈະນານຸກົມປາລີ-ລາວຫົວນີ້ ມີຄຸນະພາບດີຂຶ້ນ ແລະອີກປັດໄຈໜຶ່ງທີ່ຂ້າພະເຈົ້າບໍ່ສາມາດລືມໄດ້ ກໍຄືມູນນິທິໂຕໂຢຕາ ( THE TOYOTA FOUNDATION ) ເຊິ່ງເປັນຜູ້ສະໜັບສະໜູນທີ່ສຳຄັນດ້ານທຶນຮອນໃນການຈັດພິມປຶ້ມຫົວນີ້, ບໍ່ດັ່ງນັ້ນ,ວັດຈະນານຸກົມປາລີ-ລາວຫົວນີ້ ຄົງເກີດຂຶ້ນໄດ້ຍາກ.

ທ້າຍສຸດນີ້,ຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າວັດຈະນານຸກົມປາລີ-ລາວຫົວນີ້ຈະອຳນວຍປະໂຫຍດໃຫ້ແກ່ນັກສຶກສາ,ນັກຄົ້ນຄວ້າແລະທ່ານຜູ້ສົນໃຈທາງດ້ານອັກສອນສາດ ແລະ ພາສາສາດ ກໍຄືວັນນະຄະດີ ຂອງລາວບໍ່ຫລາຍກໍໜ້ອຍ. ຂ້າພະເຈົ້າຂໍອຸທິດໜັງສືຫົວນີ້ໃຫ້ແກ່ບິດາແລະມານດາຜູ້ບັງເກີດເກົ້າຂອງຂ້າພະເຈົ້າ,ບຸດແລະພັນລະຍາພ້ອມດ້ວຍບັນດາ ຄູບາອາຈານຜູ້ມີພະຄຸນຕະຫຼອດເຖິງບັນດາທ່ານຜູ້ນຳ ແລະວິລະຊົນຂອງຊາດທຸກທ່ານ ທີ່ໄດ້ເສຍສະລະຊີວິດເພື່ອຄວາມຍືນຍົງຄົງຢູ່ຂອງປະເທດຊາດລາວທຸກຖ້ວນໜ້າດ້ວຍເທີ້ນ.

ວຽງຈັນ, ວັນທີ່ ໑໗ ກຸມພາ ພ.ສ. ໒໕໔໗, ຄ.ສ. ໒໐໐໔

ຜູ້ຄົ້ນຄວ້າຮຽບຮຽງ ແລະຈັດພິມ ວັດຈະນານຸກົມປາລີ-ລາວ

ສະບັບປະຖົມ.

ສີສະເຫວີຍ ສຸວັນນີ.

## ຄໍາຊີ້ແຈງ.

**ອັກຂຣະພາສາປາລີ** : ອັກຂຣະ ຫຼື ອັກສອນໃນພາສາປາລີມີຢູ່ ໔໑ໂຕໂດຍແບ່ງ ເປັນ ໒ ປະເພດຄື:ສະຫຼະແລະ ພະຍັນຊະນະ.ສະຫຼະ ມີທັງຫມົດ ໘ ໂຕ ຄື: ອະ ອາ ອິ ອີ ອຸ ອູ ເອ ໂອ. ໃນ ໘ ໂຕນີ້ແບ່ງອອກເປັນ ໒ ຊະນິດ ຄື: ຣັສສະສຣະ ແລະ ທີຄະສຣະ.

**ຣັສສະສຣະ** ໄດ້ແກ່ສະຫຼະສຽງສັ້ນ ມີ ໓ ໂຕ ຄື: ອະ ອິ ອຸ ແລະ **ທີຄະສຣະ** ໄດ້ແກ່ສະຫຼະສຽງຍາວ ມີ ໕ ໂຕຄື: ອາ ອີ ອູ ເອ ໂອ.ສະຫຼະ ເອ ແລະ ໂອ ເມື່ອມີຕົວສະກົດຢູ່ນໍາ ຖືວ່າ ເປັນສະຫຼະສຽງສັ້ນ ເຊັ່ນຕົວຢ່າງ: ອາຫຸເນຍໂຍ,ໂພຊຊັງໂຄ,ເຊຕຸໂກ ເປັນຕົ້ນ. ໃນນີ້ຄໍາວ່າ ເນຍ,ໂພຊ ແລະເຊຕຸເປັນຄືກັບ ສະຫຼະສຽງສັ້ນ.

### ຄຣຸ ແລະ ລະຫຸ ສຣະ.

ຄຣຸສຣະ ແມ່ນສະຫຼະສຽງໜັກ ແບ່ງເປັນ ໓ ປະເພດຄື:

໑. ທີຄະສຣະ ຫມາຍເຖິງສະຫຼະທີ່ມີສຽງຍາວ ເຊັ່ນຄໍາວ່າ:ປາໂປ,ເຕໂຊ,ວາໂຍ ເປັນຕົ້ນ.

໒. ຣັສສະສຣະ ຫຼື ສະຫຼະສຽງສັ້ນ ແຕ່ວ່າມີຕົວສະກົດຢູ່ນໍາເຊັ່ນຄໍາວ່າ: ພຸທທັສສະ, ທັມມັສສະ, ສັງຄັສສະ ເປັນຕົ້ນ.

໓. ຣັສສະສຣະ ຫຼື ສະຫຼະສຽງສັ້ນ ແຕ່ວ່າ ມີນິຄຄະຫິຕ ຫຼືສຽງ ອັງ( ໍ ) ຢູ່ນໍາ ເຊັ່ນ: ພຸທທັງ, ທັມມັງ, ສັງຄັງ ເປັນຕົ້ນ. ເວລາອ່ານ ຫຼືສູດ ຈະຕ້ອງເນັ້ນຄໍາເຫຼົ່ານີ້ ໃຫ້ເຕັມສຽງ ຈຶ່ງຖືວ່າເປັນຄໍາທີ່ອອກສຽງໜັກ.

**ລະຫຸສຣະ** ແມ່ນສະຫຼະທີ່ມີສຽງເບົາ ອັນໄດ້ແກ່ ສະຫຼະສຽງສັ້ນທັງຫມົດ ໂດຍບໍ່ມີ ຕົວສະກົດ ເຊັ່ນຄໍາວ່າ: ມຸນິ,ກະວິ,ມະຕິ,ປະຕິ ເປັນຕົ້ນ.

## ສຸທທະສະ ແລະສັງຍຸຕຕະສະ.

**ສຸທທະສະ** ແມ່ນສະຫຼະທີ່ບໍ່ປະກອບດ້ວຍຕົວປະສົມ ໃນພາສາລາວເອີ້ນວ່າສະຫຼະເດົ່າ, ເຊັ່ນ: ອະ ອາ ອິ ອີ ອຸ ອູ ເອ ໂອ ເປັນຕົ້ນ.

**ສັງຍຸຕຕະສະ** ແມ່ນສະຫຼະທີ່ປະກອບດ້ວຍສະຫຼະສອງຕົວປະສົມເຂົ້າກັນ ແລະປ່ຽນຮູບເປັນຢ່າງອື່ນ. ເຊັ່ນ: ອະ+ອິ=ເອ, ອະ+ອຸ=ໂອ ເປັນຕົ້ນ.

ໃນສະຫຼະທັງ ໘ ໂຕນັ້ນສາມາດຈັດເປັນ ໓ ຄູ່ຄື:

໑. ອະ ອາ ເປັນຄູ່ໜຶ່ງ ຮຽກວ່າ ອະວັນໂນ

໒. ອິ ອີ ເປັນຄູ່ໜຶ່ງ ຮຽກວ່າ ອິວັນໂນ

໓. ອຸ ອູ ເປັນຄູ່ໜຶ່ງ ຮຽກວ່າ ອຸວັນໂນ.

## ການອອກສຽງສະຫຼະ.

ສະຫຼະສາມາດອອກສຽງໄດ້ ໒ ຢ່າງຄື: ອອກສຽງໃນໂຕມັນເອງໂດຍບໍ່ໄດ້ປະກອບກັບພະຍັນຊະນະ, ເຊັ່ນ: ອະ ຕົວຢ່າງ: ອະໂຄຈະໂຣ, ອາ: ອາກາໂຣ, ອິ: ອິນັງ, ອີ: ອີສາ, ອຸ: ອຸປາສະໂກ, ອູ: ອູກາ, ເອ: ເອໂກ ໂອ: ໂອກາໂສ ເປັນຕົ້ນ.
ອອກສຽງປະສົມກັບພະຍັນຊະນະ, ເຊັ່ນ: ປຣິໂສ, ວິກາລະ, ໂກວິໂທ ເປັນຕົ້ນ.

## ພະຍັນຊະນະ.

ພະຍັນຊະນະທັງຫມົດໃນພາສາປາລີ ມີ ໓໓ ໂຕ ແບ່ງອອກເປັນ ໒ ປະເພດຄື: ພະຍັນຊະນະວັກ ແລະພະຍັນຊະນະອະວັກ.

**ພະຍັນຊະນະວັກ** ແມ່ນພະຍັນຊະນະທີ່ຈັດເປັນຫມູ່ ໂດຍອີງຕາມຖານທີ່ເກີດຂອງສຽງມີ ໕ ຫມູ່ ດັ່ງນີ້:

ກະວັກ: ກ ຂ ຄ ຄ຺ ງ (ເອີ້ນວ່າ ກະ ວັກ)

ຈະວັກ: ຈ ສ຺ ຊ ຊ຺ ຍ຺ (ເອີ້ນວ່າ ຈະ ວັກ)

ຕະວັກ: ຕ຺ ຖ຺ ດ ດ຺ ນ຺ (ເອີ້ນວ່າ ຕະ ວັກ)

ຕະວັກ: ຕ ຖ ທ ທ຺ ນ (ເອີ້ນວ່າ ຕະ ວັກ)

ປະວັກ: ປ ຜ ພ ພ຺ ມ (ເອີ້ນວ່າ ປະ ວັກ)

ພະຍັນຊະນະອະວັກ ແມ່ນພະຍັນຊະນະທີ່ບໍ່ໄດ້ຈັດເປັນໝວດໝູ່ ຕາມຖານທີ່ເກີດຂອງສຽງ. ພະຍັນຊະນະປະເພດນີ້ມີທັງໝົດ ໗ ໂຕ ຄື: ຍ ຣ ລ ວ ສ ຫ ລ຺ ອໍ (ອ່ານວ່າ ອັງ)

ໝາຍເຫດ: ພະຍັນຊະທຸກໂຕ ໃຫ້ອ່ານເປັນສຽງສະຫຼະ ອະ ປະກອບ.

## ຄຳສັບ(ສັພທະ).

ຄຳສັບໃນພາສາປາລີ ມີ ໓ ຊະນິດຄື: ນາມສັບ, ອັບພະຍະສັບ ແລະກິຣິຍາສັບ.

ນາມສັບ ໄດ້ແກ່ສັບທີ່ເປັນຄຳນາມ ສາມາດປ່ຽນຮູບໄດ້ຕາມລິງ,ເພດ,ພົດ,ວິພັດ, ປັດໄຈ. ສັບປະເພດນີ້ກວມເອົາທັງຄຳຄຸນນາມ, ສັບພະນາມ,ສມາສ,ຕັດທິຕ ແລະ ນາມກິຕ, ຕົວຢ່າງ:

| ນາມສັບ: | ຄຳແປ | ຊະນິດຂອງສັບ |
|---|---|---|
| ປຸຣິສະ | ບູລຸດ(ຜູ້ຊາຍ) | ນາມນາມ |
| ສຸນທະຣະ | ດີ | ຄຸນນາມ |
| ຕຸມຫະ | ທ່ານ, ເຈົ້າ | ສັບພະນາມ |
| ປິຍະປຸດຕະ | ລູກຮັກ | ສມາສ |
| ຈັນທະນິກະ | ຊາວນະຄອນວຽງຈັນ | ຕັດທິຕ |
| ນາຍະກະ | ຜູ້ນຳ,ນາຍົກ | ນາມກິຕ. |

<u>ອັບພະຍະຍະສັບ</u> ໄດ້ແກ່ສັບທີ່ບໍ່ປ່ຽນແປງຮູບ ເຊິ່ງໄດ້ແກ່ຄໍາອຸປະສັກ,ນິບາດ, ປັດໄຈ. ອຸປະສັກສໍາລັບໃຊ້ນໍາໜ້ານາມ ແລະກິຣິຍາ ເພື່ອໃຫ້ຄວາມໝາຍປ່ຽນແປງຫລື ວິເສດ ຂຶ້ນ, ຕົວຢ່າງ:

ອະຕິ ແປວ່າ: ຍິ່ງ, ເກີນ, ກາຍໂພດ.ຕົວຢ່າງ: ອຕິສຸນທະຣະ=ດີຍິ່ງ, ດີໂພດ. ອະຕິເຣກະ=ເກີນ ໜຶ່ງ, ຫລາຍກວ່າໜຶ່ງ.

ອະທິ = ຍິ່ງ,ໃຫຍ່ : ອະທິກາຣະ = ຜູ້ເປັນເຈົ້າການ, ຜູ້ເປັນໃຫຍ່ໃນວຽກ

ອະທິປະຕິ = ຜູ້ເປັນໃຫຍ່,ນາຍໃຫຍ່,ຫົວໜ້າ,(ມີໃນຄໍາລາວ ເຊັ່ນ: ອະທິບໍດີ, ອະທິການບໍດີ ເປັນຕົ້ນ)

ອະນຸ = ນ້ອຍ, ພາຍຫລັງ, ຕາມ, ນໍາ ເຊັ່ນ:ອະນຸກໍາມະການ, ອະນຸຊົນ ເປັນຕົ້ນ.

ອະນຸກກະມະ = ຕາມລໍາດັບ. ອະນຸຊະ ຜູ້ເກີດພາຍຫລັງ,ນ້ອງເຊັ່ນ: ອະນຸຊົນ, ອະນຸພັນລະຍາ ເປັນຕົ້ນ.

ອະນຸຍຸຍາຕະ = ຮູ້ຕາມ,ອະນຸຍາດ.

ອະປະ = ບໍ່, ປາສະຈາກ, ຫລີກ ເຊັ່ນ: ອະປະມັງຄະລະ = ບໍ່ເປັນມຸງຄຸນ.

ອະປະຄັຈສະຕິ = ຫລີກໄປ,ໜີໄປ.

ອະວະ ຫລື ໂອ = ລົງ ຫລືຢັ່ງລົງ, ເຊັ່ນ: ອະວະຕາຣະ=ອະວະຕານ ການກັບລົງມາເກີດອີກ.

ໂອຕະຣະຕິ ຢັ່ງລົງ, ໂອກາສະ=ອະວະກາສະ ໃນພາສາລາວ ເປັນ ອະວະກາດ.

ອາ= ທົ່ວ,ຍິ່ງ,ກັບຄວາມ ເຊັ່ນ: ອາປູຣະນະ ເຕັມທົ່ວໝົດ,ອາພາຕິ ແຈ້ງຫລາຍ, ສະຫວ່າງເຫລືອຫລາຍ, ອາຄະມະນະ ການກັບມາ

ອຸປະ = ເຂົ້າໄປ,ໃກ້,ຮອງ, ເຊັ່ນ: ອຸປະຄະມະນະ ການເຂົ້າໄປໃກ້. ອຸປະທູຕະ=ອຸປະທູດ ຮອງທູດ, ອຸປະນາຍະກະ= ອຸປະນາຍົກ ຮອງນາຍົກ, ອຸປະຣາຊະ= ອຸປະຮາດ ຮອງເຈົ້າຊີວິດ

ອຸ: ຂຶ້ນ,ນອກ, ເຊັ່ນ: ອຸຄະຕະ: ອຸຄົດ ຂຶ້ນໄປແລ້ວ, ອຸປປະຖະ ນອກທາງ

ປຣາ = ກັບຄວາມ, ເຊັ່ນ: ປຣາຊະຍະ: ປຣາໄຊ, ເສຍໄຊ,ບໍ່ແພ້

### ນິປາຕະ.

ນິປາຕະ ຫລື ນິບາດ ແມ່ນຄຳທີ່ໃຊ້ສຳລັບລົງໃນລະຫວ່າງ ນາມສັບກໍ່ມີ, ໃນກິຣິຍາສັບກໍ່ມີ, ບອກຄວາມຫມາຍຫລາຍຢ່າງ ເຊັ່ນ : ບອກກາລະ, ສະຖານທີ່, ອຸປະມາ,ອຸປະໄມ,ປະຕິເສດ,ບໍ່ຣິກັບ,ຄວາມຖາມ,ຄວາມຮັບ ແລະຄວາມເຕືອນເປັນຕົ້ນ, ຕົວຢ່າງ:

<u>ບອກກາລ</u> : ອະຖະ ຄັ້ງນັ້ນ, ປາໂຕ ແຕ່ເຊົ້າ, ທິວາ ກາງເວັນ,ສາຍັງ ຍາມແລງ ເປັນຕົ້ນ.

<u>ບອກສະຖານທີ່</u> : ອຸທັງ ເບື້ອງເທິງ, ອຸປະຣິ ເບື້ອງເທິງ,ອະໂທ ເບື້ອງຕ່ຳ, ເຫຕຸຖາ ຢູ່ກ້ອງ,ຢູ່ພື້ນ, ອັນໂຕ ພາຍໃນ,ຢູ່ພາຍໃນ, ພະຫິ ພາຍນອກ,ຂ້າງນອກ.

<u>ບອກອຸປະມາ,ອຸປະໄມ</u> ເຊັ່ນ: ຍະຖາ ສັນໃດ, ຕະຖາ ສັນນັ້ນ, ວິຍະ ເຫມືອນກັບວ່າ, ອິວະ ພຽງດັ່ງ,ຄືດັ່ງ.

<u>ບອກປະຕິເສດ</u> ເຊັ່ນ: ນະ ບໍ່, ໂນ ບໍ່, ມາ ຢ່າ, ວິນາ ເວັ້ນ, ອະລັງ ພໍ,ພຽງພໍ.

<u>ບອກຄວາມບໍ່ຣິກັບ</u> ເຊັ່ນ: ສະເຈ ຖ້າວ່າ, ຍະທິ ຜິວ່າ

<u>ບອກຄວາມຖາມ</u> ເຊັ່ນ: ກິງ ຫລື?, ອັນໃດ? ແມ່ນຫຍັງ? ກະຖັງ ຢ່າງໃດ?, ນະນຸ ບໍ່ແມ່ນຫວະ?

<u>ບອກຄວາມຮັບ</u> ເຊັ່ນ: ອາມະ ເອີ,ເຈົ້າ,ໂດຍ, ເຫີ, ແມ່ນແທ້

<u>ບອກຄວາມເຕືອນ</u> ເຊັ່ນ: ຫັນທະ ເອົາເທາະ, ເຊີນເທາະ, ເຊີນເຢີ.

ອະ (ນິປາຕະ ຫຼື ນິບາດ) ມາຈາກ ນະ ເປັນນິບາດບອກຄວາມ ປະຕິເສດ ແປວ່າ ບໍ່. ນະ ເມື່ອປະກອບກັບສັບທີ່ບໍ່ແມ່ນ ສະຫຼະໃນພະຍາງຕົ້ນ ມີຮູບເປັນ ອະ ເຊັ່ນ ນະ+

ກຸສະລະ= ອະກຸສະລະ, ນະ+ມະນຸສໂສ= ອະມະນຸສໂສ ດັ່ງນີ້ເປັນຕົ້ນ. ແຕ່ເມື່ອປະກອບກັບສັບທີ່ເປັນສະຫຼະໃນພະຍາງຕົ້ນມີຮູບເປັນ ອະນະ ເຊັ່ນ ນະ+ ອະຣິໂຍ= ອະນາຣິໂຍ, ນະ + ອະຣິຍະທັມມະ = ອະນາຣິຍະທັມ ດັ່ງນີ້ເປັນຕົ້ນ.ອີກໄນຫນຶ່ງ ອະນີ້ນອກຈາກບອກຄວາມປະຕິເສດແລ້ວຍັງແປເປັນຢ່າງອື່ນໄດ້ອີກເຊັ່ນ ຈະເລີນ,ໃຫຍ່ ດັ່ງຕົວຢ່າງ: ຜະລະ+ ອະຜະລະ= ຜະລາຜະລະ ແປວ່າຜົນ ແລະ ຜົນອັນຈະເລີນ ຫຼື ຫມາກໄມ້ຫນ່ວຍນ້ອຍ ຫນ່ວຍໄມ້ໃຫຍ່.

## ປັດໄຈ.

ປັດໄຈແມ່ນຄຳສຳລັບໃຊ້ລົງທ້າຍຄຳນາມແລະກິຣິຍາ ເພື່ອໃຫ້ຄຳນາມນັ້ນ ມີຮູບແລະຄວາມຫມາຍປ່ຽນໄປ. ປັດໄຈໃນຄຳນາມກໍ່ມີ, ໃນອາຂຍາຕ ກໍ່ມີ, ໃນນາມກິຕ ກໍ່ມີ ແລະ ໃນຕັດທິຕ ກໍ່ມີ.

ຄຳປັດໄຈໃນນາມ ມີຄື: ໂຕ,ຕຣະ,ຕຖາ,ທາ,ທານິ,ລະ,ລິ,ຊະຊະ ເປັນຕົ້ນ, ຕົວຢ່າງ:

ໂຕ : ສັພພະໂຕ ແຕ່ທີ່ທັງປວງ, ຈາກທີ່ທັງຫມົດ

ຕຣະ : ສັພພະຕຣະ ໃນທີ່ທັງປວງ, ໃນທີ່ທັງຫມົດ

ຕຖະ : ສັພພັຕຖະ ໃນທີ່ທັງປວງ, ໃນທີ່ທັງຫມົດ

ທາ : ສະທາ ໃນກາລະທຸກເມື່ອ

ທານິ : ອິທານິ ດຽວນີ້, ບັດນີ້

ຊະຊະ : ອັຊຊະ ໃນວັນນີ້.

**ອະ ປັດໄຈປະກອບກິຣິຍາສັບ:** ໃນກິຣິຍາອາຂຍາຕ ເຊັ່ນ: ປະຈະ+ອະ+ຕິ=ປະຈະຕິ ຍ່ອມຫຸງຕົ້ມ ໃນນາມກິດ ເຊັ່ນ ກັມມະ+ກະຣະ+ອະ= ກັມມະກະຣະ (ກຳມະກອນ)ຜູ້ເຮັດວຽກງານ, ຜູ້ອອກແຮງງານ.

## ກິຣິຍາສັບ.

ກຣິຍາສັບ: ໄດ້ແກ່ສັບທີ່ມີຮູບສັບ ເຊິ່ງປະກອບຂຶ້ນຈາກທາຕຸ ຫລື ເຄົ້າ ເຊັ່ນ: ກະຣະ ແປວ່າເຮັດ,ທຳ. ຄະມະ ແປວ່າ ໄປ, ສຸ ແປວ່າຟັງ, ປິວະ ແປວ່າ ດື່ມ, ສີ ແປວ່ານອນ ເປັນຕົ້ນ. ກິຣິຍາສັບ ມີ ໒ ຊະນິດ ຄື: ກິຣິຍາອາຂຍາຕ ແລະກິຣິຍາກິຕ.

ຮູບສັບຂອງກິຣິຍາອາຂຍາຕ ປະກອບດ້ວຍ ທາຕຸ,ວິພັດ,ປັດໄຈ, ຕົວຢ່າງ: ກະຣະທາຕຸ+ໂອປັດໄຈ+ຕິວິພັດ = ສຳເລັດຮູບເປັນ ກະໂຣຕິ ແປວ່າ ຍ່ອມເຮັດ,ຍ່ອມທຳ. ຄະມະ ທາຕຸ ແປງເປັນຄັຈສະ+ອະ ປັດໄຈ + ຕິ ວິພັດ ສຳເລັດຮູບເປັນ ຄັຈສະຕິ ແປວ່າ ຍ່ອມໄປ, ຍ່ອມເຖິງ ເປັນຕົ້ນ.ຮູບສັບຂອງກິຣິຍາກິຕ ປະກອບດ້ວຍ ທາຕຸ(ເຄົ້າ) ແລະ ປັດໄຈ ເຊັ່ນຕົວຢ່າງ:

ກະຣະ ທາຕຸ + ຕະ ປັດໄຈ ສຳເລັດຮູບເປັນ ກະຕະ ແປວ່າ ເຮັດແລ້ວ,ທຳແລ້ວ.

ຄະມະ ທາຕຸ + ຕະ ປັດໄຈ = ຄະຕະ ແປວ່າໄປແລ້ວ ຈິນຕະ ທາຕຸ + ມານະ ປັດໄຈ = ຈິນຕະມາໂນ ພວມຄິດຢູ່ ເປັນຕົ້ນ.ການປ່ຽນຮູບແລະບໍ່ປ່ຽນຮູບຂອງປັດໄຈໃນນາມກິຕ, ກິຣິຍາກິຕ ແລະຕັດທິຕ ພໍໃຫ້ເປັນເຄື່ອງສັງເກດ ດັ່ງຕໍ່ໄປນີ້:

<u>ນາມກິຕ:</u> ມີປັດໄຈ ທີ່ຄົງຮູບໄວ້ກໍມີ ແປງຮູບກໍມີ ລົບຖິ້ມກໍມີ, ເຊັ່ນ: ກັມມະ+ກະຣະ+ອະ = ກັມມະກາຣະ. ໃນທີ່ນີ້ ອະ ຄົງຮູບໄວ້

ຄະມະ+ຕິ = ຄະຕິ ໃນທີ່ນີ້ ຕິ ຄົງຮູບ ແຕ່ລົບ ມະ ທີ່ຫລັງທາຕຸ(ເຄົ້າສັບ)

ສະຣະ+ຕິ = ສະຕິ ໃນທີ່ນີ້ ຕິ ຄົງຮູບ ແຕ່ລົບ ຣະ ທີ່ຫລັງທາຕຸ(ເຄົ້າສັບ)

ທີ່ແປງຮູບກໍມີ ເຊັ່ນ ນຸະວຸ ປັດໄຈ ແລະ ຍຸ ປັດໄຈ ຕົວຢ່າງ:

ນີ+ ນຸະວຸ=ອະກະ ສຳເລັດຮູບເປັນ ນາຍະກະ(ນາຍົກ) ໃນທີ່ນີ້ແປງ ອີ ທີ່ ນີ ເປັນ ຍ, ແປງນຸະວຸ ເປັນອະກະ. ດ້ວຍອຳນາດ ຂອງນຸະວຸ ປັດໄຈ ຕ້ອງ ທີ່ຄະ ສຣະ ອະ ທີ່ ນະຍະ ເປັນ ນາຍະ + ອະກະ=ນາຍະກະ(ສຣະ ອະ ເປັນໄມ້ກົງເມື່ອປ່ຽນເປັນສັບລາວ ຈຶ່ງເປັນ ນາຍົກ (ແປວ່າຜູ້ນຳພາ).

ກິຣິຍາກິຕ: ມີປັດໄຈ ທີ່ຄົງໄວ້ກໍມີ ແປງຮູບກໍມີ. ທີ່ຄົງໄວ້ ເຊັ່ນ ອະນີຍະແລະ ຕະ ປັດໄຈ, ຕົວຢ່າງ: ກະຣະ+ອະນີຍະ= ກະຣະນີຍະ, ທັສສະ+ອະນີຍະ= ທັສສະນີຍະ. ຕະ ປັດໄຈ: ຄະມະ+ຕະ= ຄະຕະ (ຕະ ຄົງໄວ້ ແຕ່ວ່າລົບຕົວຫລັງທາຕຸ) ຕະ ປັດໄຈ ທີ່ແປງຮູບ: ພຸທະ+ຕະ=ພຸທທະ(ແປງຕະ ເປັນ ທທະ).

ຕັດທິຕ: ໃນຄຳຕັດທິຕ ມີທັງຄຳປັດໄຈທີ່ຄົງໄວ້ແລະແປງຮູບ. ທີ່ຄົງໄວ້ຄື: ມະທຸ+ ຣະ= ມະທຸຣະ, ຍະສະ+ສີ = ຍະສະສີ, ສຸຂະ+ອີ= ສຸຂີ. ທີ່ແປງຮູບໄດ້ແກ່ ມັນຕຸ ແລະ ວັນຕຸ ປັດໄຈ , ເຊັ່ນ: ຣຸຈິ+ມັນຕຸ=ຣຸຈິມາ, ຄຸນະວັນຕຸ = ຄຸນະວາ ເປັນຕົ້ນ.

# ວັດຈະນານຸກົມປາລີ-ລາວ

## ອ

ອະກະຕະ ກິຣິຍາກິດ. (ອະ+ກະຣະ+ຕະ) ບໍ່ ເຮັດແລ້ວ

ອະກະຕັຍຍູ(ອກຕັຍຍູ) ນາມກິດ(ອະກະຕະ+ຍາ+ຣ) ຜູ້ບໍ່ຮູ້ຄຸນທີ່ທ່ານເຮັດໃຫ້ຕົນ.

ອະກັມປິຍະ ນ. ບໍ່ຫວັ່ນໄຫວ, ບໍ່ກ່ຳເລີບ

ອະກາຣະນະ ( ອກາຣຕ ) ນ. ບໍ່ແມ່ນເຫດ

ອະກະຣະນີຍະ(ອກຣຕີຍ ) ກິ.ກິ. (ອະ+ກະຣະ+ອະຕີຍະ) ບໍ່ຄວນເຮັດ

ອະກະໂຣນຕະ ກິ.ກິ. (ອະ+ກະຣະ+ໂອ+ອັນຕະ) ບໍ່ເຮັດຢູ່

ອະກະລຸ ນ. ນ້ຳມັນ

ອະກາຈະ ຄຸ. ບໍ່ໄຫລໄປ

ອະກາມະກະ ຄຸ. ບໍ່ປາຖະໜາ, ບໍ່ມັກໄຄ່

ອະກາລະ ນ. ບໍ່ແມ່ນການ, ບໍ່ແມ່ນເວລາ

ອະກາສິ ກິ.ອາ.(ອະ+ກະຣະ+ອິ) ໄດ້ເຮັດແລ້ວ

ອະກັລລັງ ນ. ພະຍາດ. (ໂຣຄະ - ພະຍາດ)

ອະກິຈຈະກາຣະ ນາມກິ.(ນະ+ອະ+ກິຈຈະ+ກະຣະ+ຕະ)ບໍ່ເຮັດໜ້າທີ່, ເຮັດສິ່ງທີ່ບໍ່ຄວນເຮັດ

ອະກິຣິຍະ ນາມກິ.(ອະ+ກະຣະ+ຣິຣິຍະ) ບໍ່ເປັນອັນເຮັດ

ອະກິລາສຸ ຄຸ. ບໍ່ກຽດຄ້ານ, ບໍ່ຂີ້ຄ້ານ

ອະກິຍຸຈະນະ (ອກິຍຸຈນ) ຄຸ. ຜູ້ບໍ່ມີຄວາມກັງວົນ

ອະກຸຕິລະ (ອກຸຜິລ) ຄຸ. ຊື່ສັດສຸຈະລິດ, ບໍ່ສໍໂກງ

ອະກຸໂຕພະຍະ (ອກຸໂຕກຍ) ຄຸ. ບໍ່ມີໄພ, ປອດໄພ

| | |
|---|---|
| ອະກຸປປະ | ຄຸ. ບໍ່ກໍາເລີບ, ບໍ່ຫວັ່ນໄຫວ |
| ອະກຸສະລະ | ນ. ຄວາມຊົ່ວ, ຄວາມບໍ່ດີ, ບາບ, ອະກຸສົນ |
| ອະໂກວິທະ | ຄ. ບໍ່ສະຫລາດ,ບໍ່ສາມາດ,ບໍ່ຊໍານານ |
| ອະຄະ | ນ. ພູເຂົາ, ຕົ້ນໄມ້ |
| ອະຄະຕິ | ນ. ຄວາມລໍາອຽງ, ຄວາມບໍ່ຍຸດຕິທໍາ |
| ອະຄະທະ | ນ. ຢາປົວພະຍາດ |
| ອະຄະຣຸ | ນ. ຄວາມບໍ່ໜັກ, ໄມ້ກິດສະໜາ |
| ອະຄາທະ | ນ. ເລິກກວ້າງ, ຢັ່ງບໍ່ເຖິງ |
| ອະຄາຣະ | ນ. ເຮືອນ |
| ອະຄາຣິກະ | ຕັທ. (ອະຄາຣະ+ອິກະ) ຜູ້ມີເຮືອນ, ຜູ້ຢູ່ເຮືອນ, ຜູ້ຄອງເຮືອນ |
| ອະຄິລານະ | ຄຸ. ທີ່ບໍ່ເຈັບໄຂ້ |
| ອັຄຄະ | ນ. ເລີດ, ຍອດ, ທີ່ສຸດ |
| ອັຄຄະຊະ | ນ. ພີ່, ອ້າຍ |
| ອັຄຄະລະ | ນ. ໄລປະຕູ, ກອນປະຕູ |
| ອັຄຄະລັຕຖຸມພະ (ອຄຸຄລຕຸຖຸມຼກ) ນ. ຫລົ້ມໄມ້ | |
| ອັຄຄິ | ນ. ໄຟ |
| ອັຄຄິກະ | ຕັທ. (ອັຄຄິ+ນິກະ) ຜູ້ບູຊາໄຟ |
| ອັຄຄຸະ ( ອຄຸພ ) | ນ. ຄ່າ, ລາຄາ |
| ອັຄຄິຍະ ( ອຄຸພິຍ ) | ນ. ວັດຖຸອັນຄວນບູຊາ |
| ອະຄຸະ (ອພ) | ນ. ກາງຫາວ, ຟ້າ,ບາບ,ຄວາມຊົ່ວ |
| ອັງກະ | ນ. ເຄື່ອງໝາຍ, ຮອຍ, ຕັກ, ພົກ, ໜ້າໜັງສື |

ອັງກະຍະ ນ. ກອງພິເສດ

ອັງກຸຣະ ນ. ໜໍ່, ເຊື້ອໄຂ່, ໜໍ່ແນວ

ອັງກຸສະ ນ. ຂໍສຳລັບບັງຄັບຊ້າງ, ຫລືສຳ ລັບເກາະເອົາໝາກໄມ້

ອັງໂກລະ ນ. ໄມ້ເອັນອ້າ

ອັງຄະ ນ. ສ່ວນ, ອະໄວຍະວະ

ອັງຄະຊາຕະ ນ. ອະໄວຍະວະສືບພັນຂອງຊາຍ ຫລື ຍິງ

ອັງຄະນະ ນ. ສະໜາມ, ເຄື່ອງຍົວະຍວນກິເລດ

ອັງຄະຫະ ນ. ກ້ອງແຂນ

ອັງຄະນາ ນ. ນາງ, ຜູ້ຍິງ

ອັງຄະວິຊຊາ ນ. ຄວາມຮູ້ກ່ຽວກັບລັກສະນະຂອງດິນ

ອັງຄະວິກເຂປະ ນ. ການຊຸດມືຕີນຟ້ອນ, ການເຄື່ອນໄຫວອະໄວຍະວະ

ອັງຄະເຫຕຸກາ ນ. ໄມ້ກາງເຂນ, ນິກກາງເຂນ

ອັງຄາຣະ ນ. ຖ່ານ, ເຖົ່າ

ອັງຄິກະ ຕັທ. (ອັງຄະ+ນິກະ)ປະກອບດ້ວຍສ່ວນ, ມີສ່ວນຂອງຮ່າງກາຍ

ອັງຄີຣະສະ ນ. ພະພຸດທະເຈົ້າ

ອັງຄຸຕຖະ (ອັງຄຸຝຸກ) ນ. ນິ້ວໂປ້ແມ່ມື

ອັງຄຸລີມຸທຫາ ນ. ແຫວນກາ

ອັງຄຸລີ ນ. ນິ້ວມື

ອັງຄຸລີຍະກະ ນ. ແຫວນ

ອະຈະລະ ຄ. ບໍ່ຫວັ່ນໄຫວ, ບໍ່ເຄື່ອນທີ່ ນ. ພູເຂົາ

ອະຈິຣະ ຄ. ບໍ່ຍັ້ງຍືນ, ບໍ່ທ່ຽງໝັ້ນ

ອະຈິຣັປປະພາ (ອຈິຣປຸປກາ)ນ. ສາຍຟ້າແມບ, ສາຍຟ້າແລບ

ອະຈິຣະພຸາສະ (ອຈິຣກາສ) ນ. ຟ້າແມບ,ຟ້າແລບ

ອະເຈຕະນາ ນາມກິ. (ອະ+ຈິນຕະ=ເຈຕະ+ຍຸ= ອະນາ) ຄວາມບໍ່ຄິດ, ບໍ່ມີເຈຕະນາ, ບໍ່ຕັ້ງໃຈ

ອະເຈລະກະ ນ. ຄົນເປືອຍ, ຄົນນອກສາສະໜາພຸດ

ອະຊະ ນ. ແບ້ຕົວຜູ້, ແບ້ເຖິກ

ອະຊະຄະຣະ ນ. ງູເຫລືອມ

ອະຊັຍຍຸະ (ອຊຸລຸລ) ຄຸ. ບໍ່ບໍລິສຸດ, ບໍ່ສະອາດ,

ນ. ຈັ່ງໄຣ, ອັນຕະລາຍ

ອະຊະປາລະກະ ນ. ຄົນລ້ຽງແບ້, ຄົນລ້ຽງແກະ

ອະຊະຣະກະ ຄຸ. ບໍ່ຍ່ອຍອາຫານ ນາມ. ທາດພິການ

ອະຊາ ນ. ແບ້ຕົວແມ່, ແບ້ແມ່

ອະຊານະນະ ນາມກິ. (ອະ+ຊາ+ຍຸ=ອະນະ) ການບໍ່ຮູ້

ອະຊິຕະ ກິ.ກິ. (ອະ+ຊິ+ຕະ) ບໍ່ຊະນະ, ບໍ່ແພ້

ອະຊິນະ ນ. ໜັງສັດ, ໜັງເສືອ

ອະຊິນະປັຕຕາ ນ. ເຈຍ

ອະຊິນະໂຍນີ ນ. ເນື້ອ, ກວາງ

ອະຊິມຫະ ຄຸ. ຊື່, ບໍ່ງໍ,ບໍ່ຄົດ

ອະຊິຣະ ນ. ສະໜາມ, ເດີ່ນ

ອະຊີ ນ. ແມ່ແກະ

ອະຊີຣະກະ ຄຸ. ອາຫານບໍ່ຍ່ອຍ, ທ້ອງອືດ

ອະເຊຍຍະ ນາມກິ. (ອະ+ຊີ=ເຊ+ຕະຍະ=ຍຍະ) ເອົາຊະນະບໍ່ໄດ້

ອະນິກະ (ອຕິກ) ນ. ເສນາ, ກອງທັບບົກ

ອະນຸ໌ກັຕຖຸະ (ອຕິກຜກ) ນ. ອີງຄະຣັກ, ຜູ້ປ້ອງກັນໃກ້ຊິດ

ອະນຸ (ອຕຸ) ຄຸ. ເລັກ, ນ້ອຍ, ລະອຽດ, ນຜ ປະຣະມານູ ເປັນ ໑ ອານູ.

ອະນຸະຫະ (ອຕຫ) ນ. ວັນ

ອະຕຸະວິ (ອຜວິ) ນ. ດົງ, ປ່າ, ໝູ່ໄມ້

ອະຕຸະວິມຸຂະ (ອຜວິມຸຂ) ນ. ປາກດົງ, ປາກຊ່ອງ

ອະຕິຈສະ (ອຕິຈຸລ) ຄຸ. ປອມ, ບໍ່ຈິງ,ບໍ່ແທ້.

ອະຕິ ອຸປ. ຍິ່ງ, ໃຫຍ່, ເກີນ

ອະຕິກະຣະ ນາມກິ. (ອະຕິ+ກະຣະ+ອະ) ຜູ້ເຮັດໂພດ,ຜູ້ກະທຳເກີນເຫດ

ອະຕິກັນຕະ ກິ.ກິ. (ອະຕິ+ກະມະ+ຕະ) ກ້າວລ່ວງແລ້ວ

ອະຕິກກະມະຕິ ກິ.ອາ. (ອະຕິ+ກະມະ+ຕິ) ກ້າວລ່ວງ

ອະຕິຂີນະ (ອຕິຂີຕ) ຄຸ. ບໍ່ຄົມ, ປູ້

ອະຕິຂິປປັງ ກິ.ວິ. ພະລັນຍິ່ງ, ເຣວຣີບ

ອະຕິຂີນະ (ອຕິຂີຕ) ຄຸ. ໝົດແຮງ, ເໝື່ອຍລ້າ

ອະຕິຄັຈສະຕິ (ອຕິຄຈຸລຕິ)ກິ.ອາ. (ອະຕິ+ຄະມະ+ຕິ) ລ່ວງໄປ, ຜ່ານໄປ, ບັນລຸ

ອະຕິໄຄຣະ (ອຕິໂພຣ) ຄຸ. ຮ້າຍໂພດໄປ

ອະຕິຈາຣີ ນາມກິ. (ອະຕິ+ຈະຣະ+ຕີ) ປະພຶດລ່ວງ, ປະພຶດເສຍຫາຍ

ອະຕິຕັນຫາ (ອຕິຕຕຸຫາ) ນ. ຢາກຈັດ, ຢາກຍິ່ງ, ຢາກໂພດ,ຕັນຫາຫລາຍໂພດ

ອະຕິຕຖະ ນ. ບໍ່ເປັນທ່າ, ນອກຣີດ

ອະຕິຖີ ນ. ແຂກ, ຄົນແປກໜ້າ

ອະຕິທາຣຸນະ (ອຕິທາຣຸຕ) ຄຸ. ຊົ່ວຮ້າຍ, ຫຍາບຊ້າ

ອະຕິທູຣະ ຄຸ. ໄກຍິ່ງ, ໄກຫລາຍ

ອະຕິເທວະ ນ. ຍິ່ງກວ່າເທວະດາ

| | |
|---|---|
| ອະຕິຬະມະຕິ (ອຕິລມຕິ) | ກິ.ອາ. (ອະຕິ+ລະມະ+ຕິ) ຕີ,ຕີໃຫ້ດັງ ເຊັ່ນ: ຕີກອງເປັນຕົ້ນ |
| ອະຕິຬາວະຕິ (ອຕິລາວຕິ) | ກິ.ອາ. (ອະຕິ+ລາວະ+ຕິ) ແລ່ນຫັນ |
| ອະຕິໂຬມະຈາຣີ (ອຕິໂລມຈາຣີ) | ນາມກິ. (ອະຕິ+ໂລມະ+ຈະຣະ+ຕີ) ຜູ້ປະພຶດລ່ວງປັນຍາ,ຄຶນຂາດປັນຍາ, ໂລບມາກໃນປັດໄຈ |
| ອະຕິນາເມຕິ | ກິ.ອາ. (ອະຕິ+ນະມະ+ຕິ) ລ່ວງເວລາ |
| ອະຕິປັນດິຕະ (ອຕິປຕຸຫິຕ) | ຄຸ. ສະຫລາດຍິ່ງ, ສະຫລາດໂພດ |
| ອະຕິປັຍຸຈະ (ອຕິປປຍຸຈ) | ນ. ເຫິງເກີນໄປ, ຊ້າເກີນໄປ |
| ອະຕິປາຕະ | ນາມກິ. (ອະຕິ+ປະຕະ+ຕະ) ຜູ້ຂ້າສັດ. |
| ອະຕິປປະໂຄ | ກິ.ວິ. ກ່ອນ, ນອນກ່ອນ, ຕື່ນກ່ອນ, ເຮັດກ່ອນ |
| ອະຕິພະລາ | ນ. ຫົງແດງ |
| ອະຕິຫາສະ | ຄຸ. ແສງສວ່າງ, ແຈ້ງສວ່າງ |
| ອະຕິມັຕຕະ | ຄຸ. ມາກຫັນກໍໜາ, ຫລາຍເກີນໄປ |
| ອະຕິມານະ | ນ. ໝິ່ນປະໝາດທ່ານ |
| ອະຕິມັຍຸຍະຕິ (ອຕິມລຸລຕິ) | ກິ.ອາ. (ອະຕິ+ມະນະ+ຕິ) ໝິ່ນປະໝາດ |
| ອະຕິມຸຂະຣະ | ຕັທ. (ອະຕິ+ມຸຂະ+ຣະ) ຊ່າງເວົ້າ, ປາກຈັດ, ປາກກ້າ |
| ອະຕິມຸຕຕະກະ | ນ. ໄມ້ຈິກ, ໄມ້ຮັງ |
| ອະຕິຍາຈະນະ | ນາມກິ. (ອະຕິ+ຍາຈະ+ຍຸ=ອະນະ) ຂໍຫລາຍ, ຂໍເກີນໄປ |
| ອະຕິຍຸວະ | ນ. ໜຸ່ມເຕັມຕົວ |
| ອະຕິຣິຕຕະ | ຄຸ. ຫລາຍໂພດ |
| ອະຕິເຣກະ | ຄຸ. ມາກກວ່ານຶ່ງ, ກາຍໜຶ່ງ, ພິເສດ |
| ອະຕິໂຣຈະຕິ | ກິ.ອາ. (ອະຕິ+ຣຸຈະ+ຕິ) ຮຸ່ງເຮືອງຍິ່ງ |

| | |
|---|---|
| ອະຕິວາກະຍະ | ກິ.ກິ. (ອະຕິ+ວະຈະ+ຕະຍະ) ເວົ້າລ່ວງເກີນ |
| ອະຕິວິສະ | ນ. ພິດຮ້າຍ, ຊະເອມຕົ້ນ |
| ອະຕິວັຕຕະ | ຄ. (ອະຕິ+ວັຕຕະ) ເປັນໄປລ່ວງ. |
| ອະຕິວິຍະ | ກິ.ວິ. ເຫລືອເກີນ, ມາກເກີນ |
| ອະຕິວຸດດຸະ (ອຕິວຸທຸຒ) | ຄ. ຈະເລີນຍິ່ງ, ເຖົ້າໂພດ |
| ອະຕິເວລະ | ຄ. ຍືດເຍື້ອ, ລ່ວງເວລາ |
| ອະຕິສະຍະ | ນ. ຄວາມດີຍິ່ງ, ຄວາມສົມບູນ |
| ອະຕິສາຍັງ | ນິ. ເວລາແລງ, ເວລາຄໍ່າ |
| ອະຕິສາຣະ | ນ. ທ້ອງບິດ, ທ້ອງຜູກ |
| ອະຕິສຸນະ (ອຕິສຸຓ) | ນ. ໝາບ້າ, ໝາວໍ້ |
| ອະຕີຕະ | ກິ.ກິ. (ອະຕິ+ອີ+ຕະ) ລ່ວງໄປແລ້ວ, ອະດີດ |
| ອະຕິຈສຸາ (ອຕິຈຸຉາ) | ຄ.(ອະຕິ+ອິຈຉາ)ຄວາມປາຖະໜາຍິ່ງ, ຄວາມໂລບມາກ |
| ອະຖະ | ນິ. ຄັ້ນນັ້ນ, ຄາວນັ້ນ |
| ອະທະກະ | ນາມກິ. (ອະທະ+ຓະອະ=ອະກະ) ຜູ້ກິນ |
| ອະທັສສະນະ | ນາມກິ. (ອະ+ທັສສະ+ຍຸ=ອະນະ) ການບໍ່ເຫັນ |
| ອະທິຕຸຖຸະ (ອທິຒຸຖ) | ກິ.ກິ. (ອະ+ທິສະ+ຕະ) ບໍ່ເຫັນ |
| ອະທິຕຸຖຸະປຸບພະ (ອທິຒຸຖປຸພພ) | ຄ. ບໍ່ເຄີຍເຫັນມາກ່ອນ |
| ອະທິນນະ | ກິ.ກິ. (ອະ+ທາ+ຕະ) ບໍ່ໃຫ້ |
| ອະທິຕິ | ນ. ມາດາຂອງເທພະເຈົ້າ |
| ອະທິສສະມານະ | ກິ.ກິ. (ອະ+ທິສະ+ມານະ) ບໍ່ເຫັນ |
| ອະທູພຸະກະ (ອທູຫກ) | ຄ. ບໍ່ທ່ລະຍົດ |
| ອະທຸ໌ກະຣະນຸະ (ອລິກຣຓ) | ນ. ເລື້ອງລາວ, ຄະດີ, ເຫດ |

ອະທິກະຣະນິ ( ອລິກຣຕີ ) ນ. ທັ່ງ, ໜ້າທັ່ງ

ອະທິກາຣະ (ອລິກາຣ) ນາມກິ. (ອະລິ+ກະຣະ+ຕະ) ເຮັດໃຫ້ຍິ່ງໃຫຍ່,

ນາມ. ອຳນາດ, ໜ້າທີ່, ຕຳແໜ່ງ

ອະທິໂກຕຸຕະນະ (ອລິໂກຍຸຍນ) ນາມກິ.(ອະລິ+ກຸຍຍະ+ຍຸ=ອະນະ) ເຄື່ອງສັບ,

ເຄື່ອງທຸບ, ນາມ. ຂຽງ

ອະທິຄັຈສະຕິ (ອລິຄຈຸຈຕິ)ກິ.ອາ. (ອະລິ+ຄະມະ+ຄັຈຈະ+ຕິ) ບັນລຸ, ເຖິງ

ອະທິຄັນຫາຕິ (ອລິຄຕຸຫາຕິ) ກິ.ອາ. (ອະລິ+ຄະຫະ=ຄັຕຫະ+ຕິ) ຖືເອົາ

ອະທິຄະໂຕ(ອລິຄໂຕ)ກິ.ກິ.(ອະລິ+ຄະມະ+ຕະ)ບັນລຸແລ້ວ,ເຖິງແລ້ວ, ສຳເລັດແລ້ວ

ອະທິຄະມະ (ອລິຄມ) ນ. ການໄດ້, ຄວາມສຳເລັດ

ອະທິຈິຕຕະ (ອລິຈິຕຸຕ) ນ. ຄວາມຄິດຍິ່ງ, ຄວາມສະຫງົບໃຈ, ສະມາທິຊັ້ນສູງ

ອະທິຈຈະກາ ນ. ພື້ນຮາບເທິງພູເຂົາ

ອະທິຕຸຖານະ (ອລິຍຸການ) ນາມກິ. (ອະລິ+ການ+ຍະ=ອານະ) ການຕັ້ງໃຈໝັ້ນ

ອະທິຕຸຖາຍະກະ(ອລິຍຸກາຍກ) ນາມກິ. (ອະລິ+ການ+ຍະ+ຕະອະ= ອະກະ)

ຜູ້ຄວບຄຸມ, ຜູ້ເບິ່ງແຍງ, ຜູ້ດູແລ

ອະທິຕຸຖິຕິ (ອລິຍຸກິຕິ) ນາມກິ. (ອະລິ+ການ+ຕິ) ຄວາມຕັ້ງໝັ້ນ

ອະທິປະ ( ອລິປ ) ນາມກິ. (ອະລິ+ປາລະ+ກວິ) ຜູ້ປົກຄອງ, ຜູ້ດູແລ,

ພະເຈົ້າແຜ່ນດິນ, ປະທານປະເທດ

ອະທິປະຕິ (ອລິປຕິ) ນ. ຜູ້ເປັນໃຫຍ່, ຫົວໜ້າ, ອະທິບໍດີ

ອະທິປັຍຸຍາ (ອລິປຸຍາ) ນ. ຄວາມຮູ້ຍິ່ງ, ປັນຍາຊັ້ນສູງ

ອະທິປາຍະ (ອລິປາຍ) ນາມ.ກິ (ອະລິ+ປະ+ອິ)ຄວາມມຸ້ງໝາຍ,

ຄວາມປະສົງ, ຄຳອະທິບາຍ

ອະທິປາຕະກະ (ອລິປາຕກ) ນ. ມອດ,ໝັດ, ຕັກແຕນ

ອະທິປເປຕະ (ອລິປເປຕ) ກິ.ກິ. (ອະລິ+ປະ+ອິ+ຕະ) ປະສິງແລ້ວ

ອະທິພູ (ອລິກູ) ນາມກິ. (ອະລິ+ກູ+ກວິ) ຜູ້ເປັນໃຫຍ່ແລ້ວ

ອະທິພູຕະ (ອລິກູຕ) ກິ.ກິ. (ອະລິ+ກູ+ຕະ) ເປັນຍິ່ງ, ອຳນາດໃຫຍ່ຍິ່ງ

ອະທິມັຕຕະ (ອລິມຕຸຕ) ຄຸ. ມີປະມານຍິ່ງ, ພຽງແຕ່ຫລາຍເກີນໄປ

ອະທິມານະ (ອລິມານ) ນ. ການຖືຕົວເກີນໄປ, ການໝິ່ນປະໝາດຄົນ

ອະທິມານິກະ (ອລິມານິກ) ຕັທ.(ອະລິ+ມານະ+ອິກະ) ມີຄວາມເຍີ່ຍິ່ງໃນ

ຕົວເກີນໄປ, ມີຄວາມສຳຄັນວ່າໄດ້ບັນລຸມັກຜົນ

ອະທິມຸຕຕະ (ອລິມຸຕຸຕ) ກິ.ກິ. (ອະລິ+ມຸຈະ+ຕະ) ພົ້ນໄປແລ້ວ, ປ່ອຍໄປແລ້ວ

ອະທິໂມກຂະ (ອລິໂມກຂ) ນ.ຄວາມເດັດຂາດ, ຄວາມຕັ້ງໃຈດັກແນ່,

ຄວາມນ້ອມໃຈເຊື່ອ

ອະທິໂຣຫະ (ອລິໂຣຫ) ນາມກິ. (ອະລິ+ຣຫະ+ຕະ) ການຂຶ້ນໄປ

ອະທິໂຣຫິນີ (ອລິໂຣຫິຕີ) ນ. ຂັ້ນໄດ, ເກີນກ່າຍຂຶ້ນຕົ້ນຕານ

ອະທິວະຈະນະ (ອລິວຈນ) ນ. ຊື່, ຄຳຈຳເພາະ

ອະທິວັຕຖະ (ອລິວັຕຖ) ກິ.ກິ. (ອະລິ+ວະສະ+ຕະ) ອາໄສຢູ່

ອະທິວາສະກະ (ອລິວາສກ) ນາມກິ.(ອະລິ+ວະສະ+ຕະວຸ+ອະກະ) ຜູ້ອົດທົນ

ອະທິວາສະນະ (ອລິວາສນ) ນາມກິ.(ອະລິ+ວະສະ+ຍຸ+ອະນະ) ການອົດກັ້ນ

ອະທິວາສະ (ອລິວາສ) ນ. ເຄື່ອງປະສົມຂອງຫອມ, ທີ່ອາໄສ

ອະທິສີລະ (ອລິສີລ) ນ. ສີນຊຸນສູງ

ອະທິເສຕິ (ອລິເສຕິ) ກິ.ອາ. (ອະລິ+ສີ+ຕິ) ນອນທັບ, ນອນເຕັງ

ອະທິນະ (ອລິນ) ຄຸ. ທີ່ເພິ່ງອາໄສ

ອະທິຣະ (ອລິຣ) ຄຸ. ບໍ່ກ້າ, ເຮັດໃຫ້ສະຫງົບສົນເທ

ອະທຸນາ (ອລຸນາ) ນິ. ດຽວນີ້

| | |
|---|---|
| ອະໂຫຸ (ອໂລ) | ນິ. ເບື້ອງຕ່ຳ |
| ອະໂຫຸຄະມະ (ອໂລຄມ) | ນາມກິ. (ອະໂລ+ຄະມະ+ອະ) ໄປເບື້ອງຕ່ຳ |
| ອະໂຫຸພູວະນະ (ອໂລກູວນ) | ນ. ພິພົບນາກ |
| ອະນະ | ນ. ກວຽນ |
| ອະນະນະ (ອນຓ) | ຄຸ. ບໍ່ມີໜີ້ສິນ |
| ອະນັຄຄຸະ (ອນຄຸພະ) | ຄຸ. (ນະ+ອັຄພະ) ບໍ່ມີຄ່າ, ຫາຄ່າບໍ່ໄດ້ |
| ອະນັງຄະ | ນ. ບໍ່ມີຕົວຕົນ, ນາງງາມ |
| ອະນັງຄະນະ (ອນງຄຓ) | ນ. (ນະ+ອັງຄະຓະ) ບໍ່ມີເຄື່ອງ ຍົ້ວຍວນ, ບໍ່ມີສິ່ງຊົວ |
| ອະນັຈສຸະ (ອະນຈຸລ) | ຄຸ. ຂຸ່ນ, ໝອງໝົ່ນ |
| ອະນັຕຕາ | ຄຸ. ບໍ່ມີຕົວຕົນ |
| ອະນັຕຕະມະນະ | ຄຸ. (ນະ+ອັຕຕະ+ມະນະ) ບໍ່ພໍໃຈ, ເສຍໃຈ |
| ອະນັຕຖຸະ | ນ. ຄວາມຈິບຫາຍ     ຄຸ. ບໍ່ມີປະໂຫຍດ |
| ອະນະຫຸວະຣະ (ອນລິວຣ) | ນ. (ນະ+ອະລິ+ວະຣະ) ພະພຸດທະເຈົ້າ |
| ອະນຸຈສະວິກະ (ອນນຸຈຸລວິກ) | ຄຸ. ບໍ່ສົມຄວນ |
| ອະນະເປກຂະ | ນ. ຄວາມບໍ່ເພັ່ງ,ຄວາມບໍ່ເລັງ. |
| ອະນະພຸຣະຕິ (ອນກິຣຕິ) | ນາມກິ.(ນະ+ອະກິ+ຣະມະ+ຕິ) ຄວາມບໍ່ຍິນດີຍິ່ງ |
| ອະນະມະຕັຄຄະ | ຄຸ.(ນະ=ອະນະ+ອະມະຕະ+ອັຄຄະ) ບໍ່ຮູ້ເບື້ອງຕົ້ນແລະທີ່ສຸດ, ໝາຍບໍ່ຮູ້ເຖິງສັງສາຣະວັດ |
| ອະນະຍະ | ນ. ຄວາມພິນາດ, ຄວາມເສື່ອມເສຍ |
| ອະນາຣິຍະ | ຄຸ. (ນະ+ອະຣິຍະ) ບໍ່ປະເສີດ,ປຸຖຸຊົນ |

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ